WWF

FACT SHEET

JUNE 2016

# ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ

## ການຍົກສູງສຽງ ແລະ ຄວາມເປັນຜູ້ນຳຂອງແມ່ຍິງ ໃນການຄຸ້ມຄອງຊັບພະຍາກອນສັດນ້ຳທຳມະຊາດ ໃນເຂດສີພັນດອນ, ແຂວງຈຳປາສັກ, ສປປ ລາວ.



© Bounhome Chansavath / WWF-Laos

ບົດບາດຍິງຊາຍ ເປັນພື້ນຖານສຳຄັນທີ່ນຳມາເຊິ່ງການປ່ຽນແປງຊີວິດການເປັນຢູ່ຂອງຊຸມຊົນ ແລະ ຄຸນນະພາບຊີວິດໃຫ້ມີປະສິດທິພາບ ແລະ ມີຄວາມຍືນຍົງ. ໂດຍການສ້າງສະພາບແວດລ້ອມທີ່ສົ່ງເສີມຄວາມສາມາດຂອງແມ່ຍິງໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການສ້າງລາຍຮັບເສີມ, ໂຄງການພັດທະນາແບບຍືນຍົງໂດຍອີງໃສ່ສິ່ງແວດລ້ອມເປັນຕົວຂັບເຄື່ອນໂດຍຜ່ານການມີສ່ວນຮ່ວມຫຼາຍຂຶ້ນຂອງແມ່ຍິງຢ່າງມີປະສິດທິພາບໃນຂະບວນການຕັດສິນໃຈຂອງຊຸມຊົນ.

ການປູກຈິດສຳນຶກຢູ່ຂັ້ນຊຸມຊົນ ແລະ ສ້າງຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງການເຊື່ອມໂຍງບົດບາດຍິງຊາຍເປັນປັດໃຈທີ່ມີຄວາມສຳຄັນຫຼາຍ. ການສ້າງຄວາມເຂັ້ມແຂງຂອງແມ່ຍິງ, ໂດຍສະເພາະເພື່ອໃຫ້ມີການປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາຊຸມຊົນຂອງເຂົາເຈົ້າ, ຈະເກີດຂຶ້ນບໍ່ພຽງແຕ່ຈາກການຮັບຟັງສຽງຂອງແມ່ຍິງເທົ່ານັ້ນ, ແຕ່ຍັງລວມເຖິງການປັບປຸງຄວາມສາມາດໃນການເປັນຜູ້ນຳ ຄຽງຄູ່ກັບການສ້າງຄວາມສາມາດໃນການຄຸ້ມຄອງຊັບພະຍາກອນສັດນ້ຳ ທຳມະຊາດຂອງເຂົາເຈົ້າ, ແລະ ໂດຍການໃຫ້ແມ່ຍິງມີບົດບາດໃນການເປັນຜູ້ນຳຢູ່ໃນຄະນະກຳມະການຄຸ້ມຄອງການປະມົງທີ່ຖືກສ້າງຕັ້ງຂຶ້ນໃນຊຸມຊົນ.

ແມ່ຍິງທີ່ເຂົ້າຮ່ວມໃນໂຄງການໄດ້ຮຽນຮູ້ກ່ຽວກັບຄວາມສຳຄັນຂອງການຫຼຸດຜ່ອນການສ້າງຄວາມກົດດັນໃນການນຳໃຊ້ຊັບພະຍາກອນທຳມະຊາດ, ແລະ ໄດ້ມີສ່ວນຮ່ວມໃນການສ້າງໂອກາດເພື່ອໃຫ້ມີລາຍຮັບເສີມ. ໃນຄະນະດຽວກັນ, ຄວາມພະຍາຍາມໃນການປູກຈິດສຳນຶກໃນຊຸມຊົນກ່ຽວກັບຄວາມສຳຄັນຂອງຄວາມສະເໝີພາບລະຫວ່າງຍິງ-ຊາຍ ໄດ້ຖືກກ່າວເຖິງ ແລະ ເນັ້ນຖືນຄວາມສຳຄັນຂອງພາລະບົດບາດຂອງແມ່ຍິງໃນການຄຸ້ມຄອງຊັບພະຍາກອນທຳມະຊາດຂອງຊຸມຊົນ, ເຊິ່ງສະທ້ອນໃຫ້ເຫັນການຍົກສູງຄວາມເປັນຜູ້ນຳຂອງເຂົາເຈົ້າໄດ້ຢ່າງຊອບທຳ.

## ຈຸດປະສົງຂອງໂຄງການ

ເພື່ອຍົກສູງ ສຽງຂອງແມ່ຍິງໃນການຄຸ້ມຄອງຊັບພະຍາກອນສັດນ້ຳທຳມະຊາດໃນຂັ້ນຊຸມຊົນ

ເພື່ອເສີມສ້າງ ພາວະຄວາມເປັນຜູ້ນຳຂອງແມ່ຍິງ ແລະ ຄວາມອາດສາມາດໃນການຄຸ້ມຄອງການປະມົງແບບມີສ່ວນຮ່ວມຂອງຊຸມຊົນ

ເພື່ອຫຼຸດຜ່ອນ ການສ້າງຄວາມກົດດັນໃນການນຳໃຊ້ຊັບພະຍາກອນທຳມະຊາດໂດຍຜ່ານການສ້າງຄວາມຫຼາກຫຼາຍຂອງວິຖີຊີວິດຂອງຊຸມຊົນທີ່ແມ່ຍິງເປັນຜູ້ນຳພາ

ຊຸມຊົນທີ່ໄດ້ຮັບຜົນປະໂຫຍດຈາກໂຄງການທັງຍິງ ແລະ ຊາຍ ແມ່ນໄດ້ມີສ່ວນຮ່ວມໃນການຄັດເລືອກ ແລະ ການອອກແບບກິດຈະກຳຂອງໂຄງການ.

ການປຶກສາຫາລືຮ່ວມກັບຜູ້ປະສານງານຈາກຫ້ອງການສະຫະພັນແມ່ຍິງເມືອງ ແລະ ແຂວງແມ່ນໄດ້ຈັດຂຶ້ນຢ່າງເປັນປົກກະຕິ. ຂໍ້ມູນຂ່າວສານທັງໝົດທີ່ກ່ຽວຂ້ອງກັບຈຸດປະສົງ ແລະ ເປົ້າໝາຍໂຄງການແມ່ນໄດ້ມີການເຜີຍແຜ່ຢ່າງເທົ່າທຽມ ໃຫ້ແກ່ແມ່ຍິງ ແລະ ຜູ້ຊາຍທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ. ໃນຂະນະດຽວກັນກໍ່ໄດ້ຮັບຟັງຂໍ້ສະເໜີແນະຢ່າງເປັນປົກກະຕິ.

## ຄວາມເປັນເຈົ້າການຂອງຊຸມຊົນ

ຈຸດສຳຄັນທີ່ສ້າງໃຫ້ເກີດຄວາມຍືນຍົງ, ຄວາມເປັນເຈົ້າການຂອງຊຸມຊົນເປັນຫົວຂໍ້ສຳຄັນທີ່ໄດ້ເວົ້າເຖິງໃນທຸກຄັ້ງທີ່ມີການປຶກສາຫາລື ແລະ ການປະສານງານລະຫ່ວາງກຸ່ມເປົ້າໝາຍ, ອຳນາດການປົກຄອງທ້ອງຖິ່ນ ແລະ ພະນັກງານໂຄງການ. ກິດຈະກຳທັງໝົດແມ່ນໄດ້ຖືກຮັບຮອງໂດຍຄະນະກຳມະການຂັ້ນບ້ານ. ເຊັ່ນດຽວກັບຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ໂດຍສະເພາະຫ້ອງການສະຫະພັນແມ່ຍິງ ແລະ ພະແນກສຶກສາທິການ ແລະ ກິລາ ໄດ້ເຂົ້າມາມີສ່ວນຮ່ວມໃນກິດຈະກຳໂຄງການທັງໝົດເພື່ອໃຫ້ມີການປະກອບສ່ວນຮ່ວມກັນ.

## ເລັງໃສ່ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ

ຕົວຊີ້ວັດທາງບວກຕໍ່ຜົນສຳເລັດຂອງໂຄງການໃນການມີສ່ວນຮ່ວມຂອງແມ່ຍິງໃນຊຸມຊົນໃນຕໍ່ໜ້າ, ກຸ່ມແມ່ຍິງໄດ້ສົນທະນາກັນຢ່າງຈິງຈັງກ່ຽວກັບການຄັດເລືອກກິດຈະກຳສົ່ງເສີມຊີວິດການເປັນຢູ່ທີ່ເຂົາເຈົ້າຕ້ອງການຢາກເຮັດ. ກິດຈະກຳຂອງໂຄງການສ່ວນໃຫຍ່ແມ່ນນຳພາໂດຍກຸ່ມແມ່ຍິງຂັ້ນບ້ານ ແລະ ຂັ້ນເມືອງ, ໂດຍບໍ່ມີການຈຳແນກວ່າໃຜສາມາດມີສ່ວນຮ່ວມໃນກິດຈະກຳໂຄງການໄດ້. ນອກຈາກນັ້ນຍັງໄດ້ເລັງໃສ່ຜູ້ທີ່ບໍ່ໄດ້ເຂົ້າຮ່ວມໃນກິດຈະກຳໂຄງການຂອງອົງການ WWF ຢູ່ເຂດສີພັນດອນໃນໄລຍະຜ່ານມາ.

## ຜົນສຳເລັດຂອງໂຄງການ

ໄດ້ສ້າງຕັ້ງ ກຸ່ມຜະລິດຂອງແມ່ຍິງຂັ້ນບ້ານ, ໄດ້ຈັດຝຶກອົບຮົມວິຊາຊີບໂດຍອີງໃສ່ຄວາມຕ້ອງການຈາກການສະເໜີຂອງກຸ່ມ

ໄດ້ສະໜອງ ອຸປະກອນເພື່ອສະໜັບສະໜູນກິດຈະກຳຂອງຊຸມຊົນ (ຫັດຖະກຳ, ກະສິກຳ ແລະ ການສົ່ງເສີມດ້ານການທ່ອງທ່ຽວ)

ໄດ້ຈັດຝຶກອົບຮົມ ການຕະຫຼາດໂດຍອີງໃສ່ອັນທີ່ກ່ຽວຂ້ອງສະເພາະໃນການປະກອບອາຊີບຂອງເຂົາເຈົ້າ

ໄດ້ຝຶກອົບຮົມ ຄວາມຮູ້ ແລະ ເຕັກນິກວິຊາການດ້ານການອະນຸລັກ ແລະ ການຄຸ້ມຄອງຊັບພະຍາກອນນ້ຳໃຫ້ກຸ່ມແມ່ຍິງ



© Bounhome Chansavath / WWF-Laos



© Xaiyadeth Xaithilath / WWF-Laos



© Adam Oswell / WWF-Laos

ອົງການກອງທຶນອະນຸລັກທຳມະຊາດໂລກ ປະຈຳ ສປປ ລາວ (WWF-Laos)

ເຮືອນເລກທີ່ 39, ໜ່ວຍ 5, ບ້ານສາຍລົມ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

ໂທ: +856 21 216080
ແຟກ: +856 21 251883
ເວບໄຊ້: Web: www.wwflaos.org

WWF

OXFAM